ສຳນັກງານ ຄຄຊ
ເລກ ...77...
ວັນທີ 19 JAN 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 04/ຫກ

ນະຄອນຫຼວງວຽງຈັນ, ວັນທີ: 19 ມັງກອນ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງສປປລາວ
## ປະຈຳອາທິດທີ 01-05/01/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,51% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ. ອາເມລິກາ ອອກມາບໍ່ດີ ເປັນຕົ້ນຕົວເລກການຈ້າງງານທີ່ບໍ່ລວມຂະແໜງກະສິກຳຂອງ ສ. ອາເມລິກາ ເພີ່ມຂຶ້ນພຽງແຕ່ 148.000 ຄົນ ຂອງເດືອນ 12/2017. ເນື່ອງຈາກນັກວິເຄາະຄາດຄະເນວ່າຈະເພີ່ມຂຶ້ນ 190.000 ຄົນ ຈາກເພີ່ມຂຶ້ນ 252.000 ຄົນ ໃນເດືອນຜ່ານມາ; ພ້ອມນັ້ນ, ຕົວເລກຍອດຂາຍສິນຄ້າຂາຍຍ່ອຍຂອງສະຫະພາບເອີຣົບ ເພີ່ມຂຶ້ນ 4,4% ຂອງເດືອນ 11/2017 ຈາກຫຼຸດລົງ 0,9% ໃນປີຜ່ານມາ .

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/12/2017 | ອາທິດນີ້ 05/01/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1983 | 1,2044 | -0,51% |
| ເຢນ/ໂດລາ | 112,58 | 113,22 | -0,57% |
| ບາດ/ໂດລາ | 32,56 | 32,22 | 1,06% |
| ເປໂຊ/ໂດລາ | 49,82 | 49,90 | -0,17% |
| ຣູເປັຍ/ໂດລາ | 13.565,00 | 13.413,00 | 1,13% |
| ໂດລາສິງກະໂປ/ໂດລາ | 1,3356 | 1,3279 | 0,58% |
| ຢວນ/ໂດລາ | 6,5050 | 6,4870 | 0,28% |

### 1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 2,64% ຈາກ 59,75 ໂດລາ/ບາເຣວ ມາເປັນ 61,33 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ສືບຕໍ່ຫຼຸດລົງຈາກ 4,61 ລ້ານບາເຣວ ໃນອາທິດຜ່ານມາ[1] ມາເປັນ 7,42 ລ້ານບາເຣວ ຂອງອາທິດທີ 29/12/2017.

- ສຳລັບລາຄາຄຳເພີ່ມຂຶ້ນ 1,57% ຈາກ 1.296,36 ໂດລາ/ອອນ ມາເປັນ 1.316,72 ໂດລາ/ອອນ ເນື່ອງຈາກການອ່ອນຄ່າລົງຂອງເງິນໂດລາ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ, ແລ້ວຫັນເຂົ້າມາຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ.

## 2.ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,12% ແຕ່ອ່ອນຄ່າລົງ 0,99% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,19% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 0,91% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 29/12/2017 | | | ອາທິດນີ້ 05/01/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[2] | | | | | | | | | | | | |
| ໂດລາ | 8.295,61 | 8.319,44 | 8.307,26 | 8.289,09 | 8.312,60 | 8.297,31 | 0,08% | 0,08% | 0,12% | 0,15% | 0,17% | 0,19% |
| ບາດ | 254,75 | 256,62 | 255,93 | 257,45 | 259,30 | 258,49 | -1,05% | -1,04% | -0,99% | -0,94% | -0,98% | -0,91% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ຫຼຸດລົງ 0,01% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 15,32%;

- ປະລິມານເງິນ M2 ເພີ່ມຂຶ້ນ 0,47% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,71%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (29/12/2017-04/01/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 11,67 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 30,16 ລ້ານໂດລາ ແລະ ຂາຍໂດລາໄດ້ 18,49 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 138,47 ລ້ານບາດ (ໃນນີ້ຊື້ບາດໄດ້ 98,02 ລ້ານບາດ ແລະ ຂາຍບາດໄດ້ 236,49 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາຫຼຸດລົງ 30,05% ແລະ ເງິນບາດຫຼຸດລົງ 56,59%.

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ເງິນໂດລາຈາກທະນາຄານທຸລະກິດຈຳນວນ 10 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,95 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 37,83 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍ.

---

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 22-28/12/2017 | | ອາທິດນີ້ 29/12/2017-04/01/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1,ການຊື້ເງິນຕາຕ່າງປະເທດ | 40,20 | 204,66 | 30,16 | 98,02 | -24,98% | -52,11% |
| - ທ/ຄທຸລະກິດລັດ | 13,06 | 119,37 | 5,98 | 55,89 | -54,21% | -53,18% |
| - ທ/ຄທຸລະກິດອື່ນໆ | 27,14 | 85,29 | 24,18 | 42,13 | -10,91% | -50,60% |
| 2. ການຂາຍເງິນຕາຕ່າງປະເທດ | 29,35 | 565,93 | 18,49 | 236,49 | -37,00% | -58,21% |
| - ທ/ຄທຸລະກິດລັດ | 16,10 | 127,97 | 7,03 | 84,30 | -56,34% | -34,13% |
| - ທ/ຄທຸລະກິດອື່ນໆ | 13,25 | 437,96 | 11,46 | 152,19 | -13,51% | -65,25% |
| ຊື້-ຂາຍສຸດທິທທກ | 10,85 | -361,27 | 11,67 | -138,47 | 7,56% | -61,67% |
| - ຜົດຕ່າງຊື້-ຂາຍ | 26,99% | -176,52% | 38,69% | -141,27% | 43,36% | -19,97% |
| - ມູນຄ່າການຊື້-ຂາຍ | 69,55 | 770,59 | 48,65 | 334,51 | -30,05% | -56,59% |
| 3.ການຊື້-ຂາຍລະຫວ່າງທຫລກັບ ທທກ | -3,10 | 0,00 | 10,00 | 0,00 | | |
| - ທຫລຊື້ຈາກທທກ | 0,00 | 0,00 | 10,00 | 0,00 | | |
| - ທຫລຂາຍໃຫ້ທທກ | 3,10 | 0,00 | 0,00 | 0,00 | | |
| 4.ຊື້-ຂາຍລະຫວ່າງທທກດ້ວຍກັນ | 12,95 | 137,50 | 4,95 | 37,83 | | |
| 5.ທຫລກັບ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 01/2018 ຄາດວ່າຈະຢູ່ໃນລະດັບ -0,81% (ຕົວເລກຄາດຄະເນ).

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ເພີ່ມຂຶ້ນ 126,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 40,93 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 38,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 32,24 ລ້ານໂດລາສະຫະລັດທຽບເທົ່າ.

3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 419 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 823 ສະບັບ ເທົ່າກັບ 66,26% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 139,48 ຕື້ກີບ ທຽບໃສ່ອາທິດຜ່ານມາຫຼຸດລົງ 350,90 ຕື້ກີບ ເທົ່າກັບ 71,56% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (29/12/2017-04/01/2018) ມີທັງໝົດ 2.168 ຄັ້ງ. ເຊິ່ງເປັນສະກຸນເງິນກີບ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ 1.429,32 ຕື້ກີບ ຈາກ 1.882,92 ຕື້ກີບ ມາເປັນ 453,60 ຕື້ກີບ ເທົ່າກັບ 75,9%. ສຳລັບກະຊວງການເງິນແມ່ນບໍ່ມີການເຄື່ອນໄຫວ.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 990,63 ຈຸດ ຫຼຸດລົງ 0,78% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 73.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 362,77 ລ້ານກີບ ເພີ່ມຂຶ້ນ 310,79% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 46,50% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 25-29/12/2017 | ດັດຊະນີອາທິດທີ 01-05/01/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 998,39 | 990,63 | -0,78 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX) (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 1.000 | 5.660.000 | 5.660 | **38.900** | **223.400.000** | **5.743** | 3.790,00 | 3.847,00 | 83 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 2.000 | 9.500.000 | 4.750 | **26.800** | **126.840.000** | **4.733** | 1.240,00 | 1.235,16 | -17 |
| ບໍລິສັດລາວເວີນມະຫາຊົນ | 500 | 1.925.000 | 3.500 | - | - | **3.500** | - | - | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວມະຫາຊົນ | 9.700 | 20.250.000 | 2.100 | **100** | **240.000** | **2.100** | -98,97 | -98,81 | - |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | 400 | 1.180.000 | 2.950 | - | - | **2.950** | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 31.100 | 49.795.000 | 1.601 | **7.500** | **12.290.000** | **1.639** | -75,88 | -75,32 | 38 |
| ທັງໝົດ | 43.800 | 88.310.000 | | 73.300 | 362.770.000 | | 63,98 | 310,79 | |

## 3. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ: ❶ ກອງປະຊຸມຄະນະຮັບຜິດຊອບກະກຽມສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານຄົບຮອບ 50 ປີ, ❷ ກອງປະຊຸມສ້າງຄວາມເຂົ້າໃຈກ່ຽວກັບກົດໝາຍວ່າດ້ວຍການຊຳລະກ່ອນປະກາດໃຊ້ຢ່າງເປັນທາງການ ໃນທ້າຍເດືອນ ມັງກອນ 2018 ທີ່ (ສທດ), ❸ ກອງປະຊຸມຄົບຄະນະບໍລິຫານພັກ ທຫລ ສະໄໝທີ 3 ປະຈຳປີ 2017 ທີ່ (ທຫລ), ❹ ກອງປະຊຸມຄະນະຮັບຜິດຊອບ ເພື່ອປັບປຸງຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ, ❺ ກອງປະຊຸມຄະນະຊີ້ນຳລວມ ກ່ຽວກັບການປະເມີນຄວາມສ່ຽງແຫ່ງຊາດ (NRA) ທີ່ (ທຫລ), ❻ ກອງປະຊຸມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ, ❼ ກອງປະຊຸມປຶກສາຫາລື ເພື່ອປະກອບຄຳເຫັນໃສ່ຮ່າງບູລິມະສິດ ພາຍໃຕ້ເສົາຄ້ຳເສດຖະກິດ ທີ່ສະເໜີໂດຍ ສິງກະໂປ ໃນໄລຍະການເປັນປະທານອາຊຽນປີ 2018 ທີ່ (ກະຊວງອຸດສາຫະກຳ ແລະ ການຄ້າ) ແລະ ❽ ເຂົ້າຮ່ວມງານແຂ່ງຂັນກິລາ

ມິດຕະພາບ ເພື່ອສະເຫຼີມສະຫຼອງວັນຊາດ ທີ 02 ທັນວາ ຄົບຮອບ 42 ປີ ແລະ ວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ ຄົບຮອບ 69 ປີ ທີ່ (ກະຊວງປ້ອງກັນປະເທດ).

**III.ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາແລະອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- ສືບຕໍ່ຄົ້ນຄວ້າກ່ຽວກັບ: ❶ ຂໍ້ຕົກລົງວ່າດ້ວຍກິດຈະກຳການເຄື່ອນໄຫວສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ ຂໍ້ຕົກລົງວ່າດ້ວຍການເຄື່ອນໄຫວຕ້ານສະກັດກັ້ນການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍ ແລະ ❸ ການສ້າງຮ່າງຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນຍ່ອຍ (ACH);
- **ກະກຽມຈັດກອງປະຊຸມ:** ❶ ກອງປະຊຸມຜ່ານທາງໂທລະສັບກັບກະຊວງການເງິນໄທ ເພື່ອກະກຽມເປັນປະທານຮ່ວມກອງປະຊຸມ WC-CMD ທີ່ປະເທດ ສິງກະໂປ, ❷ ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງຮ່າງກົດໝາຍວ່າດ້ວຍລະບົບຊຳລະແຫ່ງຊາດ, ❸ ກອງປະຊຸມຄະນະສະເພາະກິດ ຂອງລັດຖະບານໃນການແກ້ໄຂບັນຫາບໍລິສັດພີເອັສ ສົ່ງເສີມກະສິກຳ ແລະ ອຸດສາຫະກຳ ຄົບວົງຈອນ ຂາອອກ-ຂາເຂົ້າ, ❹ ກອງປະຊຸມຄະນະສະເພາະກິດການປະເມີນຄວາມສ່ຽງລະດັບຊາດ ກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ແລະ ❺ ກອງປະຊຸມສະພາບໍລິຫານ ສທຄ ສະໄໝສາມັນຄັ້ງທີ 2 ປະຈຳປີ 2017.
- **ກະກຽມເຂົ້າຮ່ວມກອງປະຊຸມ:** ❶ ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານປະຈຳປີ ຂອງຂະແໜງການພາຍໃນ ແລະ ວຽກງານ 3 ສ້າງທົ່ວປະເທດ ປະຈຳປີ 2017 ແລະ ວາງທິດທາງແຜນການ ປີ 2018 , ❷ ກອງປະຊຸມປຶກສາຫາລື ກ່ຽວກັບການປະກອບຄຳເຫັນຕໍ່ກັບບົດປະເມີນເສດຖະກິດມະຫາພາກຂອງ IMF ໄຕມາດ 4 ປີ 2017, ❸ ກອງປະຊຸມວຽກງານອາຊຽນ +3 ທີ່ ປະເທດ ສິງກະໂປ, ❹ ກອງປະຊຸມປຶກສາຫາລືຮ່ວມກັບໂຄງການກ່ຽວກັບແຜນສ້າງຄວາມເຂັ້ມແຂງ ວຽກງານປະຊາສຶກສາທາງດ້ານການເງິນ ແລະ ❺ ກອງປະຊຸມທະວິພາຄີລະຫວ່າງທະນາຄານກາງແຫ່ງຊາດກຳປູເຈຍ ແລະ ທະນາຄານແຫ່ງ ສປປ ລາວ ທີ່ ປະເທດກຳປູເຈຍ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ